## ຂະບວນການກິລາແລ່ນ-ຍ່າງເພື່ອສຸຂະພາບ ເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 54 ປີ




ໃນຕອນເຊົ້າເວລາ 6 ໂມງ ຂອງວັນທີ 1 ຕຸລາ 2022 ທີ່ ເຂດເສດຖະກິດພິເສດ ບຶງທາດຫຼວງ ທະນາຄານແຫ່ງ ປປ ລາວ ພ້ອມດ້ວຍ ທະນາຄານທຸລະກິດ ທີ່ດໍາເນີນທຸລະກິດຢູ່ ສປປ ລາວ ໄດ້ຮ່ວມກັນຈັດຂະບວນການກິລາແລ່ນ-ຍ່າງເພື່ອສຸຂະພາບ ເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 54 ປີ (7/10/1968–7/10/2022) ໄລຍະ 2,5 ກິໂລແມັດ ແລະ 5,5 ກິໂລແມັດ ພາຍໃຕ້ການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະນໍາ-ຄະນະກົມຈາກທະນາຄານແຫ່ງ ສປປ ລາວ, ຄະນະອໍານວຍການຂອງທະນາຄານທຸລະກິດ ແລະ ບໍລິສັດ Fintech ພ້ອມດ້ວຍພະນັກງານຂະແໜງການທະນາຄານຫຼາຍກວ່າ 800 ທ່ານ ເຂົ້າຮ່ວມຂະບວນການໃນຄັ້ງນີ້.

ໃນໂອກາດນີ້ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໃນນາມຕ່າງໜ້າຄະນະນໍາຂອງ ທຫລ ຂໍສະແດງຄວາມຍ້ອງຍໍຊົມເຊີຍ ຄະນະຮັບຜິດຊອບທີ່ໄດ້ມີການຫ້າງຫາກະກຽມຂະບວນການໃນມື້ນີ້ ເຮັດໃຫ້ກິດຈະກໍານີ້ສາມາດເກີດຂຶ້ນໄດ້ ແລະ ຂໍອວຍພອນໄຊມາຍັງບັນດາການນໍາ, ແຂກທຸກໆທ່ານ ທີ່ມາຮ່ວມງານໃນມື້ນີ້ ຈົ່ງມີສຸຂະພາບແຂງແຮງ, ມີຄວາມສຸກ ແລະ ປະສົບຜົນສໍາເລັດໃນໜ້າທີ່ວຽກງານຕາມຄາດໝາຍ.






ທ່ານ ນາງ ຂັນແກ້ວ ຫຼ້າມະນີເງິາ ຄະນະປະຈໍາພັກ ທຫລ, ຫົວໜ້າຄະນະຮັບຜິດຊອບຈັດຂະບວນການແລ່ນມິນິມາລາທອນ ໄດ້ໃຫ້ຮູ້ຈຸດປະສົງຂອງຂະບວນການໃນມື້ນີ້ ແມ່ນເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງທະນາຄານແຫ່ງ ສປປ

ລາວ ຄົບຮອບ 54 ປີ ໃຫ້ມີຄວາມເບີກບານມ່ວນຊື່ນ, ມີຄວາມຟົດຟື້ນ, ມີຊີວິດຊີວາ, ເສີມສ້າງຄວາມສາມັກຄີ, ເສີມຂະຫຍາຍສາຍສຳພັນອັນສະໜິດແໜ້ນ ໃຫ້ແໜ້ນແຟ້ນຂຶ້ນກວ່າເກົ່າພາຍໃນຂະແໜງການທະນາຄານ-ການເງິນຂອງພວກເຮົາ. ໂດຍກ່ອນໜ້ານີ້, ທຫລ ໄດ້ປະກອບສ່ວນຊ່ວຍສັງຄົມໂດຍມອບເງິນຊ່ວຍຜູ້ປະສົບໄພນ້ຳຖ້ວມຢູ່ແຂວງອຸດົມໄຊຈຳນວນ 215.880.000 ກີບ ແລະ ສະໜັບສະໜູນການປະກວດພິທີກອນ, ໂຄສົກໄວໜຸ່ມທີ່ຈັດໂດຍສະຖານີໂທລະພາບແຫ່ງຊາດລາວຈຳນວນ 20.000.000 ກີບ ທ່ານຍັງໄດ້ໃຫ້ຮູ້ອີກວ່າ ທະນາຄານແຫ່ງ ສປປ ລາວ ໄດ້ຮັບການສ້າງຕັ້ງຂຶ້ນ ໃນວັນທີ 7 ຕຸລາ 1968 ທີ່ເມືອງວຽງໄຊ ແຂວງຫົວພັນໂດຍການຊີ້ນຳ-ນຳພາຂອງພັກ ກໍ່ຄືສູນກາງແນວລາວສ້າງຊາດ ມີໜ້າທີ່ພິມຈຳໜ່າຍເງິນກີບປົດປ່ອຍອອກຈໍລະຈອນ ແລະ ຄຸ້ມຄອງ-ນຳພາວຽກງານທະນາຄານຢູ່ເຂດປົດປ່ອຍ ທັງເປັນຄັງເງິນຮັບໃຊ້ເບີກຈ່າຍເງິນເດືອນ-ເງິນບໍລິຫານໃຫ້ບັນດາສຳນັກງານ-ອົງການອ້ອມຂ້າງສູນກາງ ແລະ ເຂດພິເສດ, ຜະຕິບັດນະໂຍບາຍສິນເຊື່ອເພື່ອຂະຫຍາຍການຜະລິດ ແລະ ທັງເປັນການຕໍ່ສູ້ດ້ານເງິນຕາກັບຝ່າຍສັດຕູ. ຈົນມາຮອດປະຈຸບັນ ທະນາຄານແຫ່ງ ສປປ ລາວ ແມ່ນປະຕິບັດ 3 ໜ້າທີ່ຫຼັກຄື: ❶ ຄຸ້ມຄອງມະຫາພາກທາງດ້ານເງິນຕາ ໃຫ້ມີສະຖຽນລະພາບ, ❷ ຄຸ້ມຄອງສະຖາບັນການເງິນ ໃຫ້ມີຄວາມໝັ້ນຄົງ, ❸ ຄຸ້ມຄອງລະບົບການຊຳລະໃຫ້ມີປະສິດທິພາບ. ຜ່ານຂະບວນວິວັດແຫ່ງການກຳເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຕະຫຼອດ 54 ປີ ພາຍໃຕ້ການຊີ້ນຳ-ນຳພາຂອງພັກ ແລະ ລັດຖະບານ; ຂະແໜງການທະນາຄານໂດຍສະເພາະ ທຫລ ໄດ້ຮັບການພັດທະນາຂຶ້ນບໍ່ຢຸດຢັ້ງ ເປັນຕົ້ນວຽກງານວິຊາສະເພາະ ໄດ້ຮັບການຍົກສູງຂຶ້ນທາງດ້ານປະລິມານ ແລະ ຄຸນນະພາບ ຊຶ່ງຖືເອົາວຽກງານການເມືອງ-ແນວຄິດ ເປັນບັນຫາສຳຄັນຕົ້ນຕໍ ໂດຍຈັດຕັ້ງປະຕິບັດຂໍ້ແຂ່ງຂັນ "ຮັກຊາດ ແລະ ພັດທະນາຕິດພັນກັບການຮັກສະຖຽນລະພາບເງິນຕາ ແລະ ສະໜອງທຶນແກ້ໄຂຄວາມທຸກຍາກ". ປັດຈຸບັນທະນາຄານແຫ່ງ ສປປ ລາວມີສຳນັກງານໃຫຍ່ ແລະ ສາຂາ 5 ແຫ່ງ, ທະນາຄານທຸລະກິດ 43 ແຫ່ງ ແລະ ສະຖາບັນການເງິນ 235 ແຫ່ງ.




✍ ຂ່າວ ແລະ ພາບໂດຍ: ນ. ປາໄນ ພັນທະລາ